AGING AND LONG TERM SUPPORT ADMINISTRATION
PO BOX 45600
OLYMPIA WA 98504-5600

# ສິດທິຂອງທ່ານ

## Your Rights

ທ່ານໄດ້ຮັບສິດທີ່ຈະເປັນອິສຣະຈາກການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ແລະ ການປ່ອຍປະລະເລີຍ. ຖ້າມັນມີເຫດຜົນທີ່ຈະເຊື່ອວ່າທ່ານໄດ້ປະສົບພົບພໍກັບການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ຫລື ການປ່ອຍປະລະເລີຍ, ທ່ານມີສິດທີ່ຈະ:

1. ເຮັດການລາຍງານໄປຫາກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS) ແລະ ເຈົ້າຫນ້າທີ່ຕຳຣວດ ແລະ ແລກປ່ຽນ ຣາຍຣະອຽດຕ່າງໆນຳກັນທີ່ທ່ານເຊື່ອວ່າສາມາດກ່ຽວກັນກັບການສືບສວນ, ແລະ ຊີ້ຕົວທຸກໆຄົນທີ່ທ່ານເຊື່ອວ່າອາດຈະມີ ຣາຍຣະອຽດທີ່ກ່ຽວກັນກັບກໍຣະນີ.
2. ເປັນອິສຣະຈາກການແກ້ແຄ້ນສຳລັບການລາຍງານ ຫລື ການເຮັດໃຫ້ມີການລາຍງານກ່ຽວກັບການປະຖິ້ມ,ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ,ຫລືການປ່ອຍປະລະເລີຍ.
3. ຖືກປະຕິບັດນຳດ້ວຍກຽດ ແລະເວົ້ານຳດ້ວຍພາສາທີ່ນ່ານັບຖື.
4. ການອຳນວຍຄວາມສະດວກທີ່ເຫມາະສົມສຳລັບຄວາມເສັຽອົງຄະຂອງທ່ານເມື່ອເວລາລາຍງານ, ແລະ ໃນຣະຫວ່າງການ ສືບສວນ ແລະ ການດຳເນີນການທາງການປົກຄອງ.
5. ຮ້ອງຂໍເອົາຄຳສັ່ງທີ່ຫວງຫ້າມຄົນໃດຄົນນຶ່ງຜູ້ທີ່ໄດ້ປະຖິ້ມ,ກົດຂີ່ຂົ່ມເຫັງ,ສວຍໂອກາດດ້ານການເງິນຫລືປ່ອຍປະລະເລີຍ ທ່ານຈາກການຍັງຢູ່ໃນເຮືອນຂອງທ່ານ,ການມີການຕິດຕໍ່ນຳທ່ານ,ຫລືການເຂົ້າເຖິງເງິນຫລືຊັບສິນຂອງທ່ານ.
6. ຮັບເອົາຈາກກົມ DSHS ຣາຍຣະອຽດ ແລະ ການສົ່ງຕໍ່ທີ່ເຫມາະສົມໄປຫາຫ້ອງການອື່ນທີ່ສາມາດສະນັບສະນູນ, ສືບສວນ, ຫລື ດຳເນີນການ.
7. ຖືກແຈ້ງບອກກ່ຽວກັບສະພາບຂອງການສືບສວນ, ການດຳເນີນການ, ການກະທຳຂອງສານ, ແລະ ຜົນອອກມາໂດຍຫ້ອງ ການທີ່ກຳສຳນວນເອກສານຕ່າງໆຊຶ່ງໃນນັ້ນທ່ານເປັນຜູ້ເຄາະຮ້າຍ.
8. ຮ້ອງຂໍເອົາການສົ່ງຕໍ່ໄປເອົາການສະນັບສະນູນ ຫລື ການຊ່ວຍເຫລືອທາງກົດຫມາຍເພື່ອຈະຊ່ວຍເຫລືອນຳການວາງແຜນ ເຣື່ອງຄວາມປອດພັຍ, ການສືບສວນ, ແລະ ການຟັງເຣື່ອງ.
9. ຮ້ອງທຸກຫາກົມ DSHS ຢ່າງເປັນທາງການ ຫລື ບໍ່ເປັນທາງການ, ກ່ຽວກັບການສືບສວນ ຫລື ການດຳເນີນການ, ແລະ ໄດ້ຮັບຄຳຕອບໂດຍທັນທີໂລດ.

**ເພື່ອຈະລາຍງານການກົດຂີ່ຂົ່ມເຫັງ, ການປະຖິ້ມ, ການປ່ອຍປະລະເລີຍ, ການປ່ອຍປະລະເລີຍຕົນເອງ ຫລື ການສວຍໂອກາດ ທາງການເງິນ, ຫລື ເພື່ອຈະສອບຖາມເອົາຣາຍຣະອຽດ, ໃຫ້ໂທຫາ:**

**1-866-EndHarm (1-866-363-4276)**

ສຽງເວົ້າ/**TTY** ເຂົ້າຫາໄດ້ **1-800-737-7931**

ທ່ານຈະຖືກຊີ້ງຕໍ່ໄປຫາຫ້ອງການສຳພາດໃຫມ່ APS ທ້ອງຖິ່ນເພື່ອຈະເຮັດລາຍງານ ຫລື ເພື່ອຈະຂໍເອົາຣາຍຣະອຽດ.

ຣາຍຣະອຽດການຕິດຕໍ່ທ້ອງຖິ່ນ: